# ຄວາມຈິງຕໍ່ມວນຊົນ

Ottawa County Health Department

## ໝວດອາການກ່ຽວກັບປອດຂອງຮັນທະວາຍຣັສ

[HANTAVIRUS PULMONARY SYNDROME]

### ໝວດອາການກ່ຽວກັບປອດຂອງຮັນທະວາຍຣັສຄືຫຍັງ?

ນີ້ເປັນພະຍາດທີ່ຮ້າຍແຮງ ແລະ ສ່ວນຫລາຍແລ້ວເປັນພະຍາດໃນປອດທີ່ເຖິງຂັ້ນເຮັດໃຫ້ຕາຍໄດ້. ມັນແຜ່ລາມໂດຍໜູພຸກ ແລະ ໜູ ແລະ ສ່ວນຫລາຍແລ້ວຈະມີຢູ່ໃນພາກທິດຕາເວັນຕົກຂອງສະຫະລັດອາເມຣິກາ.

### ຮັນທະວາຍຣັສແຜ່ລາມແນວໃດ?

ຜູ້ຄົນສາມາດຕິດຕໍ່ພະຍາດນີ້ໄດ້ໂດຍຜ່ານ:

- ການແຕະຕ້ອງນໍາອາຈົມຈາກໜູທີ່ມີພະຍາດນີ້.
- ການຫາຍໃຈເອົາອາຍຈາກຍ່ຽວ, ອາຈົມ ຫລື ນໍ້າລາຍຈາກໜູທີ່ມີພະຍາດນີ້.
- ຖືກໜູທີ່ມີພະຍາດນີ້ກັດ.
- ຕາມທໍາມະດາແລ້ວຈະບໍ່ແຜ່ລາມຈາກຄົນຫາຄົນ.

### ອາການບາງຢ່າງມີຫຍັງແດ່?

- ຄີງຮ້ອນ (101 ຫາ 104 ອົງສາ)
- ປວດຫົວ
- ເຈັບທ້ອງ
- ເຈັບຂໍ້ຕໍ່
- ເຈັບຫລັງ
- ປຸ້ນທ້ອງປວດຮາກ ແລະ ຮາກ
- ຫາຍໃຈບໍ່ເຕັມທ້ອງ

### ຈະກວດພົບຮັນທະວາຍຣັສໄດ້ແນວໃດ?

ໂດຍການກວດເລືອດ.

### ຈະຮັກສາຮັນທະວາຍຣັສໄດ້ດ້ວຍວິທີໃດ?

ພະຍາດນີ້ບໍ່ມີວິທີຮັກສາ ຫລື ສັກຢາ. ຖ້າມີອາການນີ້, ໃຫ້ຕິດຕໍ່ຫາທ່ານໝໍ ແລະ ຕ້ອງບອກເພີ່ນວ່າທ່ານໄດ້ແຕະຕ້ອງນໍາໜູພຸກ ຫລື ໜູ.

### ຈະປ້ອງກັນຈາກຮັນທະວາຍຣັສດ້ວຍວິທີໃດ?

ວາຍຣັສເຊິ່ງສາມາດມີຊີວິດລອດໄດ້ໃນອາກາດ ແລະ ພື້ນທີ່ຈະສາມາດກໍາຈັດໄດ້ໂດຍໃຊ້ເຄື່ອງທໍາຄວາມສະອາດໃນບ້ານ, ດັ່ງເຊັ່ນນໍ້າຢາເຮັດໃຫ້ຕາຍສີ ແລະ ນໍ້າເຫລົ້າ.

### ສໍາລັບລາຍລະອຽດເພີ່ມເຕີມກ່ຽວກັບ ຮັນທະວາຍຣັສ ໃຫ້ຕິດຕໍ່ໄປທີ່:

Ottawa County Health Department
www.miOttawa.org
Center for Disease Control and Prevention
www.cdc.gov/ncidod/diseases/hanta/hps/index.htm
ເລກໂທຣະສັບ: (888) 246-2675

12251 James St., Suite 400
Holland, MI 49424

ເລກໂທຣະສັບ: (616) 396-5266
ເລກແຟັກ: (616) 393-5643

ແວບໄຊ: www.miOttawa.org